# ຟ້າປົ້ມ

ໂດຍ ດວງຈຳປາ



# ຟ້າປື້ນ

ໂດຍ ດວງຈຳປາ

ດອກເກດ
DokkeD

ບໍລິສັດ ດອກເກດ ຈັດພິມ

2002

# ຄຳນຳ ຂອງ ຜູ້ຈັດພິມ

ການອ່ານປຶ້ມ ມີຄວາມສຳຄັນ ແລະ ເປັນກິດຈະກຳ ຂອງຄົນໃນສັງຄົມທີ່ຈະເລີນ. ຊົນຊາດລາວ ມີວັດທະນະທຳການອ່ານ ແລະ ຟັງນິຍາຍ ຊາດົກ ທີ່ອຸດົມໄປດ້ວຍຄຳສອນ ແລະບົດຮຽນຊີວິດອັນລ້ຳຄ່າ ມາໄດ້ຫລາຍສະຕະວັດ ຄົນລາວຈຶ່ງເປັນຊົນຊາດທີ່ມີຄວາມສີວິໄລທາງດ້ານຈິດໃຈ ມາເຫິງນານ.

ມາໃນປັດຈຸບັນ ການປະດິດແຕ່ງ ບໍ່ໄດ້ຖືກຈຳກັດ ສະເພາະເລື່ອງອິງສາສະໜາ ແລະ ຮູບການແຕ່ງ ກໍບໍ່ຈຳເປັນຕ້ອງ ມີແຕ່ບົດກາບກອນໂຄງສານ. ເລື່ອງສັ້ນ ຫລື ນິຍາຍ ທີ່ແຕ່ງຂຶ້ນໃໝ່ ແບບຄຳຮຽງເປັນຄື ປ່ອງຢ້ຽມໃຫ້ເຮົາສ່ອງ ແນມເຫັນເຫດການ ແລະການປ່ຽນແປງຂອງສັງຄົມ ທີ່ຜ່ານມາ ທັງໃຫ້ຄວາມບັນເທີງ ແລະຄະຕິເຕືອນໃຈນຳອີກ.

ນະໂອກາດນີ້ ບໍລິສັດດອກເກດ ຈັດພິມ ຂໍນຳສະເໜີ "ຟ້າ ປີ້ນ" ອັນເປັນຜົນງານທີວທີ່ສອງ ດ້ວຍເນື້ອໃນສຳນວນອັນ ບໍ່ຫລ້າສະໄໝຂອງ ດວງຈຳປາ ນັກປະພັນຍິງ ຜູ້ຍືນຍົງໃນ ປະເທດຂອງພວກເຮົາ ມອບເປັນຂອງຂວັນ ເພື່ອຄວາມສຸກສັນ ຫັນສາ ຂອງທ່ານຜູ້ອ່ານທຸກຄົນ.

*ວຽງຈັນ 30 ສິງຫາ 2002*

*ດາລາ ວິຣະວົງສ໌ ກັບລະຍາ*

# 44 ປີ ຜ່ານມາ
# ດວງຈຳປາ ວ່າຫຍັງແດ່ !

ເປັນຫຍັງ ຈຶ່ງຟ້າປັ້ນ ? 44 ປີ ຜ່ານໄປແລ້ວ ແຕ່ ດວງຈຳປາ ມາລາດວງນຶ່ງ ຂອງ ອຸທິຍານອັກສອນ ແຫ່ງແດນລ້ານຊ້າງ ຍັງຄົງສົ່ງກິ່ນຫອມອ່ອນໆ ແຕ່ຍືດເຍື້ອກະຈາຍກົ້ວ ທົ່ວປະເທດ ຄົງຈະບໍ່ເປັນການເວົ້າໂຍກເກີນໄປ ຖ້າຈະບອກວ່າ ດວງຈຳປາ ເປັນນາມປາກກາ ຂອງນັກຂຽນແມ່ຍິງລາວ ຜູ່ທຳອິດ ແຫ່ງສະ ຕະວັດທີ 20 -21 ເພາະເລື່ອງທຳອິດ ຂຽນ ແລະພິມອອກ ໃນປີ 1958 ຊື່ "ນາຣີດັ່ງ ດອກໄມ້ ?" (ເມືອງລາວ ສະບັບທີ 2) ແລະ ຫລ້າສຸດເລື່ອງ "ນ້ອງສາວ" ຂຽນສຸດຫມາດໆ ນ້ຳມຶກເກືອບບໍ່ທັນ ແຫ້ງ ສຳນັກພິມດອກເກດ ກໍນຳມາພິມ ໂຮມເຫລັ້ມ ຮ່ວມກັບເລື່ອງ ທຳອິດ ທັງນີ້ ເພື່ອໃຫ້ທ່ານຜູ້ອ່ານ ສາມາດຕິດຕາມພັດທະນາການ ຂອງຜູ້ຂຽນ ບົນກະຫນົບອັກສອນ ທີ່ເຕັມໄປດ້ວຍ ບວກຂຸມ ແຕ່ມີ ສະເຫນດຶງດູດ ບໍ່ໃຫ້ ດວງຈຳປາ ວາງປາກກາໄດ້.

ເຖິງວ່າ ມີຜົນງານ ຢາດຢາຍເທິງ ກະຫນົບອັກສອນເສັ້ນນີ້ ມາເກືອບເຄິ່ງ ສະຕະວັດ ແຕ່ "ຟ້າປັ້ນ" ກໍເປັນໂຮມເລື່ອງສັ້ນ ເຫລັ້ມທີ 2 ຂອງ ດວງຈຳປາເທົ່ານັ້ນເພາະ ທີ່ຜ່ານໆມາ ດວງ ຈຳປາ ຈັດພິມເລື່ອງສັ້ນ ໂຮມກັບນັກຂຽນອື່ນໆ ມາຮອດປີ 1988 ຈຶ່ງມີໂຮມເລື່ອງສັ້ນ ຊຸດທຳອິດ ຊື່ "ກ່ອນຈະເຖິງວັນນີ້" ປະມານ

40 ປີ ກ່ອນ ແມ່ຍິງໃນອາຊີອາຄະເນ ກໍຄື ຢູ່ລາວ ມີສະຖານະພາບ ຕ່ຳຕ້ອຍກວ່າຜູ້ຊາຍ ໃນທຸກດ້ານ ບໍ່ວ່າດ້ານສັງຄົມ ເສດຖະກິດ ການເມືອງ ແມ່ຍິງມັກຖືກເບິ່ງວ່າ ເປັນພຽງດອກໄມ້ ປະດັບແຈກັນ ບໍ່ສະຫລາດທໍ່ຜູ້ຊາຍ ໄຮ້ອຳນາດ ໃນຫລາຍໆປະເທດ ແມ່ຍິງຖືກ ກົດຂີ່ໃຫ້ເປັນທາດ ທາງການາລົມ ແມ່ນແຕ່ຢູ່ໃນຄອບຄົວຂອງ ຕົນເອງ. "ບາຣິດັ່ງດອກໄມ້ ?" ອາດຈະເປັນ ຄຳຖາມທີ່ລ້ຳຍຸກເກີນ ໄປເມື່ອປີ 1958, ຄວາມຄິດກ່ຽວກັບຄວາມສະເຫມີພາບ ຍິງ-ຊາຍ ຂອງ ດວງຈຳປາ ຈຶ່ງຜ່ານກະແສນິຍົມລວມຂອງສັງຄົມໄປ ບໍ່ມີ ສຽງຕອບຮັບ ຫລື ຄັດຄ້ານຢ່າງຈິງຈັງ ຢ່າງໃດກໍຕາມ ດວງຈຳປາ ກໍໄດ້ເຮັດຫນ້າທີ່ ນັກຂຽນຜູ້ຍຶດຫມັ້ນໃນອຸດົມການ. ໃນຕົ້ນຊຸມປີ 70 (1971-74) ດວງຈຳປາ ສ້າງເວທີ ໃຫ້ແກ່ຕົນເອງ (ໂຮມ ເລື່ອງ ສັ້ນສອງຊຸດຈັດພິມເອງ ແລະວາລະສານ ໄຜ່ຫນາມ ລາຍເດືອນ) ດວງຈຳປາ ໄດ້ສະແດງສີມືການປະພັນ ອອກ ຢ່າງຮອບດ້ານ ບໍ່ວ່າ ໂຄງຮ່າງເລື່ອງ ສຳນວນທັນສະໄຫມ ແລະການໃຊ້ຄຳລາວແບບ ບູຮານໆ. ເລື່ອງສັ້ນ ທັງ 4 ຢູ່ໃນນີ້ ສະເຫນີສະພາບສັງຄົມວຽງຈັນ ຍຸກກ່ອນປົດປ່ອຍ ມັນສະທ້ອນໃຫ້ເຫັນຄວາມຂັດແຍ່ງ ພາຍໃນ ສະມາຊິກຂອງສັງຄົມ ທີ່ປັ່ນປ່ວນນຳອຳນາດເງິນ ການສວຍໃຊ້ ອຳນາດສ່ວນບຸກຄົນ ການສໍ້ລາດບັງຫລວງ ພວມລະບາດ ຢູ່ໃນທຸກລະດັບລາຊະການ ການຫລົ້ນກິນຟຸມເຟືອຍ ທີ່ກາຍເປັນ ຄວາມນິຍົມມະຫາຊົນ ທີ່ໂອບຫຸ້ມສັງຄົມສະໄຫມນັ້ນໄວ້ .

"ເຊົ້າວັນທິດ" (ກຸຍກິ່ນສາວ ຄາວຜູ້ຊາຍ,1971) ເປັນເລື່ອງ ຂອງພໍ່ເຮືອນໄວກາງຄົນ ທີ່ຄວນຈະຮັບຜິດຊອບຄອບຄົວ ໃຫ້ຄວາມ ອົບອຸ່ນແກ່ລູກເມຍ ແຕ່ຊ້ຳໄປມົວເມົາຫລົງໄຫລນຳ ສາວນ້ອຍ

ຮຸ່ນລູກ ຈົບລືມໜ້າທີ່. ດວງຈຳປາ ໃຊ້ວາທະສິນ ເລົ່າເລື່ອງ ສະແດງອາລົມ ຄວາມນຶກຄິດ ຜ່ານໂຕລະຄອນເອກ "ເຮົາ" ສຳນວນສຽດເຍີ້ຍແບບຍິກແກມຢອກ ຈະພາຜູ້ອ່ານ ບໍ່ຢາກວາງມື ຈາກປຶ້ມຈົນກວ່າເລື່ອງຈະສຸດລົງ ພ້ອມດ້ວຍ ສຽງຫົວໃຈແບບໂລ່ງໆ ວາດໃດວາດໜຶ່ງ ເພາະດວງຈຳປາ ຫາທາງອອກໃຫ້ໂຕລະຄອນແບບບໍ່ໂຫດຫ້ຽມເກີນໄປ ນັ້ນອາດຈະເປັນລາງ ບອກເຕືອນສະມາຊິກໃນຄອບຄົວ ໃຫ້ຫັນ ມາເອົາໃຈໃສ່ກັນແລະກັນ ຫລາຍຂຶ້ນດັ່ງທີ່ໂຕລະຄອນ "ເຮົາ" ສຳນຶກໄດ້ ຍ້ອນມີລູກທີ່ຍັງເຫັນຄຸນຄ່າຄວາມສຳຄັນຂອງພໍ່ແມ່. ແນວຄິດຂອງນັກຂຽນ ໃນຈຸດນີ້ກໍນັບວ່າລ້ຳໜ້າອີກ ໃນຍຸກທີ່ພໍ່ແມ່ສ່ວນໃຫຍ່ ບໍ່ມັກໃຫ້ຄວາມສຳຄັນແກ່ລູກໆ ແຕ່ ດວງຈຳປາ ຊີ້ໃຫ້ເຫັນ ວ່າການມີສ່ວນຮ່ວມຂອງລູກໆສາມາດ ກອບກູ້ສະຖານະການທີ່ທຳທ່າ ວ່າຈະຮ້າຍໄປໜ້ານັ້ນດີຂຶ້ນໄດ້.

ສ່ວນເລື່ອງ "ເມື່ອຂ້າພະເຈົ້າເປັນພະເອກ" (ກຸຍກິ່ນສາວ ຄາວຜູ້ຊາຍ, 1971) ກໍເຜີຍແບສະພາບສັງຄົມຫລົ້ມກົນ ຂອງຊົນຊັ້ນປົກຄອງຢ່າງໄຮ້ດຽງສາ ໂດຍອາໄສຄວາມຊື່ຈ້າ ຂອງຊາຍໜຸ່ມ ຜູ້ຄິດວ່າຕົນເອງຕາແຫລມ ຕີລາຄາຄົນຈາກ ໜ້າຕາທ່າທີ ດວງຈຳປາໃຊ້ສຳນວນງ່າຍໆ ກົງໄປກົງມາ ດຳເນີນເລື່ອງໄວ ຕິດຕາມການປະພຶດໄປເລື້ອຍໆ ນີ້ກໍແມ່ນວິທີການຂຽນ ທີ່ດຶງໃຫ້ຜູ້ອ່ານຕ້ອງອ່ານຈົນສຸດ ແຕ່ເມື່ອສຸດແລ້ວ ຜູ້ອ່ານອາດຕ້ອງຄິດຄຳນຶງ ເພາະມີບັນຫາ ມີຄຳຖາມ ປະໄວ້ ໃຫ້ຄິດຕໍ່ ດັ່ງ "ແລະກ້າວ່າ ... ສາວນ້ອຍໃນເມືອງລາວເຮົາ ຍັງມີຜູ້ບໍລິສຸດສະອາດ ເປັນຕາຮັກຕາຖະໜອມ ແລະ ..." ນັບວ່າ ເປັນຄຳຖາມທີ່ໜັກໜ່ວງໜ້າເປັນ

ຫ່ວງ ທີ່ໂຍນລົງໃສ່ກາງເອິກຂອງຜູ້ເປັນພໍ່ເປັນແມ່ ຫລາຍຄົນ.

ສຳລັບເລື່ອງ " ຟ້າປິ້ນ" (ໄຜ່ໜາມ 1973) ທີ່ຍົກເອົາເປັນຊື່ປຶ້ມຊຸດນີ້ ກໍແປກຕ່າງຫມູ່ອອກໄປໃນເຊີງ ການນຳສະເຫນີ. ອີກຄັ້ງຫນຶ່ງ ຕົວລະຄອນເອກ ເປັນຜູ້ຊາຍ ແລະເອີ້ນໂຕເອງວ່າ "ເຮົາ". ໃນເລື່ອງນີ້ ຜູ່ຂຽນສຽດສີທັດສະນະຄະຕິທາງຊົນຊັ້ນຢ່າງກົງໆ. ເລື່ອງແມ່ຍ່າກຽດຊັງລູກໃພ້ ວ່າບໍ່ເຫມາະສົມກັບລູກຊາຍ ເປັນເນື້ອເລື່ອງທີ່ມີມາແຕ່ເຫິງນານ ແລະ ຈະມີຕະຫລອດໄປ. ດວງຈຳປາ ໃຫ້ "ເຮົາ" ເລົ່າເລື່ອງໄປເລື້ອຍໆ ຄວາມຂັດແຍ່ງສູງຂຶ້ນ ຈົນເກີງຂັ້ນແຕກຫັກ ແລະ "ເຮົາ" ໄດ້ກາຍເປັນວິນຍານ ທີ່ຕິດຕາມການປະພຶດຂອງມະນຸດ ແລ້ວ ດວງຈຳປາ ກໍສະເຫນີ ສັດຈະທຳທີ່ວ່າ ຄວາມປ່ຽນແປງເປັນອະນິດຈັງ ໂດຍສອດແຊກເອົາຄວາມເຊື່ອແບບບູຮານເຂົ້າມາ ຊ່ອຍແກ້ບັນຫາ ຢ່າງກົມກືນ ເຊິ່ງຢັ້ງຢືນວ່າ ຄົນແຕ່ກ່ອນສະ ຫລາດ ເອົາໂຕລອດໄດ້ຢ່າງໃດ ເຊັ່ນ ແມ່ຍ່າຜູ່ກຽດຊັງລູກໃພ້ບ້ານນອກ ຢ່າງເຂົ້າກະດູກແລ້ວນັ້ນ ໄດ້ປ່ຽນໃຈມາຮັກລູກໃພ້ຄົນດຽວກັນນັ້ນ ໄດ້ແນວໃດ.

"ຫລົງຄອນ" ເປັນເລື່ອງສຸດທ້າຍ ຂອງຍຸກຕົ້ນຊຸມປີ 70 (ໄຜ່ຫນາມ, 1974) ໃນຊຸດນີ້ ເກືອບບໍ່ເປັນເລື່ອງສັ້ນ ໃນທັດສະນະຂອງນັກວິຈານວັນນະຄະດີ ເພາະບໍ່ໄດ້ສະເຫນີ ຕົວລະຄອນເອກ ໃຫ້ໂດດເດັ່ນ ແລະບໍ່ມີເຫດການເລື່ອງລາວສຳຄັນໃດໆ ແຕ່ ດວງຈຳປາ ໃຊ້ພາສາອ່ອນຫວານ ສະທ້ານອາລົມ ສະທ້ອນທາດແທ້ຂອງຜູ່ຊາຍ ທີ່ຍາມໃດ ກໍມັກສວຍໂອກາດເອົາປຽບ ແມ່ຍິງ. "ຂໍໂທດອ້າຍລືມໂຕໄປ" ຈຶ່ງເປັນຄຳເວົ້າທີ່ໃຊ້ໄດ້ຕະຫລອດໄປ ຢ່າງໃດກໍຕາມ ການຮູ້ຈັກຂໍໂທດ ຢ່າງຫນ້ອຍ ກໍສະແດງວ່າ ຜູ້ກ່ຽວເລີ່ມມີ

ຄວາມຄິດ ມີສະຕິແດ່ແລ້ວ.

ມາເຖິງຍຸກ ປາຍຊຸມປີ 80 ຂຶ້ນມາ, ພາຍຫລັງການປ່ຽນແປງລະບອບການປົກຄອງ ຫລາຍຄົນທີ່ຕິດຕາມອ່ານຜົນງານ ຂອງ ດວງຈຳປາ ກໍຍັງບໍ່ຜິດຫວັງ ໃນສຳນວນໂວຫານ ອັນເປັນເອກະລັກ, ເລື່ອງສັ້ນສິບກວ່າເລື່ອງ ທີ່ອອກມາໃນລະຍະນີ້ ປ່ຽນເຂັມຈາກ ວິພາກ ເຜີຍແບສັງຄົມ ມາເປັນການ ຊຸກຍູ້ ໃຫ້ກຳລັງໃຈ ຄົນຮຸ່ນໃຫມ່ ທີ່ຈະສືບທອດພາລະກິດ ປະເທດຊາດ. "ນາງຄົນນັ້ນ" (ວັນນະສິນ, 1985) ຈຶ່ງເປັນຄ້າຍ ຄື ຍິງສາວໃນອຸດົມການ ທ່ານຫມໍຍິງ ຜູ້ເຕັມໄປດ້ວຍຄວາມເມດຕາ ເອື້ອອາລີ ຕໍ່ຄົນເຈັບປ່ວຍເຮັດຫນ້າທີ່ ດ້ວຍຄວາມເອົາໃຈໃສ່. ດວງຈຳປາ ສະເຫນີຕົວລະຄອນ ແບບເຊື່ອງສັ້ນ ໂດຍໃຫ້ນາງ ປາກົດຢູ່ໃນຈົດຫມາຍ ທີ່ຕົກເຮ່ຍສະບັບຫນຶ່ງ ເຊິ່ງມີຄວາມຫມາຍເລິກໆວ່າ ທີ່ແທ້ແລ້ວ ຄົນແບບນີ້ ມີຢູ່ໃສ? ເຮັດແນວໃດຈຶ່ງຈະພົ້ ? ຈຶ່ງຈະຮູ້ຈັກ ? ອີກຄັ້ງຫນຶ່ງ ທີ່ ດວງຈຳປາຍັງວາງຄຳຖາມໃຫ້ຜູ້ອ່ານ ເອົາໄປຄຶດຫາຄຳຕອບເອງວ່າ ເຮັດແນວໃດ ສັງຄົມເຮົາ ຈຶ່ງຈະສ້າງຄົນແບບນັ້ນໄດ້?

ດວງຈຳປາ ອາດຕັ້ງຄວາມຫວັງໄວ້ກັບແມ່ຍິງລາວ ຮຸ່ນໃຫມ່ ຢາກໃຫ້ເປັນ ຄື "ນາງຄົນນັ້ນ" ຫລື "ແກ້ວມະນີ" ໃນ "ກ່ອນຈະເຖິງວັນນີ້" (1988) ແລະ "ນາງດອກ ແກ້ວ" (ກໍລະກົດ, 2002) ເພາະຍິງສາວທັງສາມທີ່ ດວງຈຳປາ ສ້າງພາບ ໂດຍຜ່ານ ປາກ ກໍຄືສາຍຕາຜູ້ຊາຍເອງ ລ້ວນແຕ່ມີຄວາມເຂັ້ມແຂງ ທະນົງ ໃນກຽດສັກສີຂອງແມ່ຍິງ, "ແກ້ວມະນີ" ຕັດສິນໃຈ ບໍ່ແຕ່ງດອງກັບ "ສົມບູນ" ຍ້ອນເຊື່ອຫມັ້ນ ໃນຄວາມຮູ້ຄວາມສາມາດທີ່ຕົນມີ ແລະນາງກໍເອົາຊະນະ ຄຳຫມິ່ນປະຫມາດຂອງຜູ້ຊາຍ ແລະ ທັດສະນະ ຄະຕິ

ເກົ່າໆ ທີ່ວ່າແມ່ຍິງບໍ່ສາມາດເຮັດແນວອື່ນໄດ້ ນອກຈາກເປັນແມ່ບ້ານ ແລະເຮັດວຽກຢູ່ກັບເຮືອນ.

ຈາກປະສົບການລົງພື້ນຖານກວ່າສິບປີໃນທົ່ວປະເທດ, ດ້ວຍສາຍຕາອັນແຫລມຄົມຂອງນັກຂຽນ ດວງຈຳປາແນມເຫັນ ແລະຮັບຮູ້ການປ່ຽນແປງຕ່າງໆ ທີ່ພວມອຸບັດຂຶ້ນ ເຊິ່ງບາງຢ່າງ ສ້າງຄວາມເຈັບປວດໃຫ້ວິຕົກ ແລະ ຫ່ວງໃຍ ບາງຢ່າງບໍ່ຢາກໃຫ້ເກີດແຕ່ກໍເກີດ ເຊັ່ນ ການອົບພະຍົບ ຂອງແມ່ຍິງຊົນນະບົດ ເຂົ້າມາຢູ່ໃນຕົວເມືອງແບບບໍ່ໄດ້ກຽມຕົວມາກ່ອນ ຫລືການໂດດເຂົ້າສູ່ວິຖີຊີວິດແບບວັດຖຸນິຍົມ ແລະການຕົກ ຢູ່ພາຍໃຕ້ອິດທິພົນ ຂອງລັດທິບໍລິໂພກນິຍົມຂອງຍິງສາວໄວອ່ອນ ໃນຕົວເມືອງ ແລະເຂດນອກ ບາງຢ່າງກໍຢາກປົກປັກຮັກສາເຊັ່ນ ການດຳລົງຊີວິດທີ່ປອດໃສພໍໃຈໃນສະພາບເປັນຢູ່ ທີ່ພໍດີ ພໍເຫມາະກັບຕົນເອງ ເຊັ່ນ ບາງດອກແກ້ວ ແລະແມ່ ມີໂອກາດ ອອກຈາກບ້ານເກີດເມືອງນອນ ກໍບໍ່ມາ. "ນ້ອງສາວ" ຈຶ່ງສະເຫນີທາງອອກເສັ້ນນຶ່ງໃຫ້ລູກຍິງຊາວຊົນນະບົດ.

ເວລາສີ່ສິບກວ່າປີ ບໍ່ໄດ້ເຮັດໃຫ້ ອຸດົມຄະຕິ ອັນຫນັກແຫນ້ນເດັດດ່ຽວ ຂອງ ດວງຈຳປາ ຫວັ່ນໄຫວສັ່ນກະເທືອນ. ແມ່ຍິງ ແມ່ຍິງ ແລະ ແມ່ຍິງ ສາມາດຕັດສິນ ເລືອກເສັ້ນທາງຊີວິດຂອງຕົນ ເປັນທີ່ເພິ່ງ ແລະເປັນທີ່ຮັກ ຂອງລູກ ຜົວ ຄອບຄົວ ບ້ານເມືອງ ປະເທດຊາດໄດ້ !

*ວຽງຈັນ, ກັນຍາ 2002*

*ດວງເດືອນ ບຸນຍາວົງ*





# ບາລີ ດັ່ງດອກໄມ້ ???

ເຂົ້າປະຕູບ້ານມາ ຈິດໃຈຂອງດອກໄມ້ ກໍເຂົ້າສູ່ວຽກງານ.

ໜ້າວຽກປະຈຳວັນຂອງດອກໄມ້ ບໍ່ມີຫຍັງສັບສົນ. ມັນເປັນສິ່ງທີ່ນາງປະຕິບັດມາເປັນປີໆ ແລະກໍບໍ່ທັນເບື່ອໜ່າຍແຕ່ຢ່າງໃດ. ຕື່ນເຊົ້າມາໜຶ້ງເຂົ້າ ກຽມອາຫານປັ້ນເຊົ້າໃຫ້ໄທເຮືອນ - ເວົ້າແນວນີ້ລະ ເພາະດອກໄມ້ເປັນພຽງຄົນອາໄສຢູ່ - ແມ່ນວ່າເປັນຫລານທາງເມຍເພິ່ນ ກໍຫ່າງໆ - ໄດ້ມີບ່ອນນອນແລກກັບວຽກເຮືອນອັນເບົາບາງ ກໍນັບວ່າ ເປັນບຸນ. ກະຂອງເບົາ ! ວຽກທຸກຢ່າງເຮັດຄາວດຽວແລ້ວ ບໍ່ຄືຢູ່ຊົນນະບົດ - ນ້ຳຕ້ອງໄປຫາບມາແຕ່ໄກ. ເຂົ້າກໍຕຳຈົນຂາລາ ຟືນກໍຕ້ອງໄປຫາບມາແຕ່ປ່າ. ອັນນີ້ຫຍັງ ບໍ່ຈັກວ່າເຕົາກ໊າສ ເຕົາໄຟ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ